


## ປະຫວັດຄວາມເປັນມາຂອງຊົນເຜົ່າຫໍ້

ຊົນເຜົ່າຫໍ້ ແມ່ນຊົນເຜົ່າຫນຶ່ງທີ່ຂຶ້ນກັບໃນວົງຄະນະຍາດແຫ່ງຊາດລາວໂດຍສະເພາະແມ່ນ ແຂວງອຸດົມໄຊ. ຊົນເຜົ່າຫໍ້ຢູ່ແຂວງອຸດົມໄຊມີພາສາປາກເວົ້າເປັນຂອງຕົນເອງ ແລະ ມີຕົວຫນັງສືຂຽນເປັນຂອງຕົນເອງແຕ່ຊົນເຜົ່າຫໍ້ຍັງຮັກສາຄວາມເຊື່ອຖືຮີດຄອງປະເພນີແລະວັດທະນະທຳ-ສັງຄົມທີ່ເປັນເອກະລັກຂອງຕົນໄວ້ເປັນຢ່າງດີ. ໃນຫນຶ່ງ ປີຂອງຊົນເຜົ່າຫໍ້ ຈະມີພິທີແລະງານບຸນປະເພນີຫຼາຍໆຄັ້ງຕໍ່ປີແຕ່ບຸນປະເພນີທີ່ສຳຄັນກວ່າຫມູ່ແມ່ນບຸນກິນຈຽງ ຫຼື ບຸນປີໃຫມ່ຂອງທຸກໆປີ, ຊົນເຜົ່າຫໍ້ ມັກຈະເຮັດຮີດຄອງດ້ວຍການຂ້າຫມູເພື່ອລ້ຽງຜີເຮືອນ ( ຜີພໍ່, ຜີແມ່ ) ໃນຄໍ່າ ຄືນແຮມ 14 -15 ຄໍ່າຂອງ ເດືອນ 2 ຫຼື 3 ຂອງທຸກໆປີ ແມ່ນມື້ເລີ່ມຕົ້ນກິນຈຽງດ້ວຍການຈູດຫມາກກະໂພກມີ ສຽງຟົດສະຫນັ່ນຫວັ່ນໄຫວທົ່ວບໍລິເວນ. ນອກຈາກນີ້ຍັງມີເຄື່ອງ ດົນຕີພື້ນເມືອງ ຫຼາຍຊະນິດຄືເວີ່, ສີຊໍ, ກະຈັບປີ່, ຂຸ່ຍ,ແກ່ ແລະອື່ນໆ.

ປະຫວັດຄວາມເປັນມາຂອງຊົນເຜົ່າຫໍ້ ຢູ່ແຂວງອຸດົມໄຊ ມີກົກເຄົ້າຕົ້ນກຳເນີດມາຈາກປະເທດຈີນ, ຊົນເຜົ່າ ຫໍ້ໄດ້ອົບພະຍົບ ແລະ ເຄື່ອນຍ້າຍມາຢູ່ແຂວງຜົ້ງສາລີ ໃນສັດຕະວັດທີ່ 19 ແຕ່ຍົກຍ້າຍລົງມາຢູ່ແຂວງອຸດົມໄຊ ແມ່ນໃນຊຸມປີ 1965-1970 ມີປະມານສອງຄອບຄົວ ຢູ່ບ້ານຫ້ວຍຂຸມ ເມືອງໄຊ ເທດສະບານແຂວງອຸດົມໄຊ, ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍ ວັນທີ່ 2 ທັນວາ 1975 ຈົນຮອດປະຈຸບັນນີ້ຊົນເຜົ່າຫໍ້ໄດ້ເຄື່ອນຍ້າຍເຂົ້າມາຢູ່ແຂວງອຸດົມໄຊນັບມື້ນັບຫຼາຍຂຶ້ນ,

ຊື່ເອີ້ນ: ຊົນເຜົ່າຫໍ້ແມ່ນຊື່ທີ່ເຂົາເຈົ້າມັກທີ່ສຸດ ແລະ ຊົນເຜົ່າອື່ນໆກໍ່ເອີ້ນເຂົາເຈົ້າແມ່ນຊົນເຜົ່າຫໍ້ ແຕ່ຄຳສັບທີ່ວ່າ ຫໍ້ມີຄວາມຫມາຍແນວໃດກໍ່ບໍ່ທັນມີຜູ້ໃດທີ່ຈະອະທິບາຍໄດ້ເທື່ອ.

ພາສາ: ຊົນເຜົ່າຫໍ້ຢູ່ ແຂວງອຸດົມໄຊ ມີພາສາປາກເວົ້າເປັນຂອງຕົນເອງ ແລະ ມີຕົວຫນັງສືຂຽນເປັນຂອງຕົນເອງ, ເຜົ່າຫໍ້ໄດ້ ຈັດເຂົ້າໃນຫມວດພາສາ ຈີນ-ຕິເບດ ຂອງສາຂາຫ່ານຫໍ້.

ຄວາມເຊື່ອຖື, ຮີດຄອງປະເພນີ ແລະ ວັດທະນະທຳ-ສັງຄົມຂອງຊົນເຜົ່າຫໍ້: ຊົນເຜົ່າຫໍ້ເຖິງແມ່ນວ່າໄດ້ມາຕັ້ງຖິ່ນຖານມາ ຫາກິນຢູ່ ແຂວງອຸດົມໄຊ ແຕ່ດົນນານແຕ່ວ່າຊົນເຜົ່າຫໍ້ຍັງຮັກສາຄວາມເຊື່ອຖື, ຮີດຄອງປະເພນີ ແລະ ວັດທະນະທຳ-ສັງຄົມທີ່ ເປັນເອກະລັກຂອງຊົນເຜົ່າຕົນເອງໄວ້ເປັນຢ່າງດີ. ແຕ່ລະຄອບຄົວຂອງຊົນເຜົ່າຫໍ້ ແມ່ນເຊື່ອຖືຜີພໍ່, ຜີແມ່, ຜີຂອງບັນພະບູລຸດຕົນທີ່ໄດ້ລ່ວງຫລັບໄປ ໂດຍການເຮັດຫິ້ງຮ້ານບູຊາໄວ້ໃນເຮືອນຂອງ ແຕ່ລະຄອບຄົວ, ນອກຈາກນີ້, ກໍ່ຍັງມີຈຳນວນຫນຶ່ງແມ່ນໄດ້ ເຊື່ອຖືສາສະໜາເຕົ໋າ.

ດ້ານລະບົບຄອບຄົວ ແລະ ເຊື້ອສາຍຂອງຊົນເຜົ່າຫໍ້ແມ່ນສືບທອດຕະກຸນທາງພໍ່ເປັນຫຼັກ, ໃນຄອບຄົວ ພໍ່ຈະເປັນຜູ້ທີ່ມີສິດອຳນາດໃນການບໍລິຫານທັງຫມົດ, ການສືບທອດມູນມໍລະດົກຂອງພໍ່ແມ່ແມ່ນລູກຊາຍເທົ່ານັ້ນ ແລະ ລູກຊາຍກົກຈະເປັນຜູ້ທີ່ ມີສິດໄດ້ຮັບມູນມໍລະດົກ ແລະ ຊັບສົມບັດຂອງພໍ່ແມ່ຫຼາຍກ່ວາລູກຜູ້ອື່ນໆ ໃນຄອບຄົວ,

ການແຕ່ງດອງຂອງຊົນເຜົ່າຫໍ້: ຈະແຕກຕ່າງກັບຊົນເຜົ່າອື່ນໆ ຍ້ອນວ່າສ່ວນຫຼວງຫຼາຍແມ່ນຂຶ້ນກັບການຕັດສິນຂອງພໍ່ ແມ່, ພໍ່ແມ່ມີສິດອຳນາດຕົກລົງໃຫ້ລູກທຸກຄົນຕ້ອງປະຕິບັດຕາມ, ຜູ້ເປັນພໍ່ແມ່ ມັກຈະໃຫ້ບັນດາລູກໆ ຂອງຕົນແຕ່ງດອງໃນໄວ ທີ່ຍັງຫນຸ່ມນ້ອຍທີ່ສຸດ. ພາຍຫຼັງແຕ່ງດອງແລ້ວລູກຍິງຕ້ອງໄປຢູ່ເຮືອນຂອງພໍ່ແມ່ຜົວ ເພື່ອ ເບິ່ງແຍງລ້ຽງດູຄອບຄົວຂອງຜົວເປັນ ສ່ວນໃຫຍ່ໃນຊົນເຜົ່າຫໍ້, ຈຸດພິເສດອັນຫນຶ່ງອີກຂອງຊົນເຜົ່າຫໍ້ ມັກຈະໃຫ້ລູກແຕ່ງດອງກັບຄົນທີ່ຮັ່ງມີເປັນສ່ວນຫຼາຍ.

ລັກສະນະເຮືອນຊານ: ຂອງເຜົ່າຫໍ້ສະໄຫມກ່ອນຈະເປັນລັກສະນະເຮືອນຕິດດິນ, ການຈັດແບ່ງຈຳນວນຫ້ອງ ນອນພາຍ ໃນເຮືອນ ແມ່ນອີງໃສ່ຈຳນວນສະມາຊິກໃນຄອບຄົວມີຫຼາຍ ຫຼື ຫນ້ອຍ ໃຫ້ເຫມາະສົມກັບຈຳນວນຄົນໃນຄອບຄົວ. ຊົນເຜົ່າຫໍ້ ມີ ເອກະລັກ ໃນການປະດັບປະດາເຮືອນຊານຂອງຕົນດ້ວຍຫຼາຍສີສັນແຕກຕ່າງກັນເຊັ່ນ: ເຄື່ອງມືໃນການຂ້າສັດ, ຫອກ, ງ້າວ ແລະ ດາບປະດັບເອ້ໄວ້ເທິງປະຕູເຮືອນ, ຮູບແບບຕ່າງໆ ທີ່ມີລັກສະນະມຸງຄຸນ ແລະ ອື່ນໆ.

ດ້ານປະເພນີ ແລະ ພິທີກຳຕ່າງໆ: ໃນຫນຶ່ງປີຂອງເຜົ່າຫໍ່ຈະມີພິທີ ແລະ ງານບຸນປະເພນີຫຼາຍຄັ້ງຕໍ່ປີ. ແຕ່ບຸນປະເພນີສຳ ຄັນກ່ວາຫມູ່ ແມ່ນບຸນກິນຈຽງ ຫຼື ບຸນປີໃຫມ່ຂອງທຸກໆ ປີຊົນເຜົ່າຫໍ້ມັກຈະເຮັດຮີດຄອງດ້ວຍ ການຂ້າຫມູເພື່ອລ້າງຜີເຮືອນ (ຜີພໍ່ແມ່)
ໃນຄໍ່າຄືນແຮມ 14 -15 ຄໍ່າຂອງເດືອນ 2 ຫຼື ເດືອນ 3 ຂອງທຸກໆປີແມ່ນມື້ເລີ່ມຕົ້ນກິນຈຽງດ້ວຍການຈູດຫມາກກະໂພະ ສຽງຟົດສະຫນັ່ນຫວັ່ນໄຫວທົ່ວບໍລິເວນ.

ດ້ານສິລະປະວັນນະຄະດີຂອງຊົນເຜົ່າຫໍ້: ແມ່ນຮ້ອງເພງເປັນສ່ວນໃຫຍ່ ເຊິ່ງເນື້ອໃນທຳນອງເພງຮ້ອງຈະພັນ ລະນາຄວາມຮັກມັກຂອງຄູ່ບາວສາວ, ວິຖີຊີວິດປະຈຳວັນ, ເວົ້າເຖິງດິນແດນແຫ່ງການກຳເນີດຂອງຊົນເຜົ່າຕົນ, ເວົ້າເຖິງການຕໍ່ສູ້ ກັບສັດຕູໄພທຳມະຊາດ, ສັດຕູຜູ້ຮຸກຮານດ້ວຍຄວາມອົດທົນຕໍ່ສູ້ຂອງຊົນເຜົ່າຫໍ້ ກັບທຳມະຊາດ ແລະ ອື່ນໆ, ນອກນີ້ຍັງມີເຄື່ອງດົນຕີພື້ນເມືອງຫຼາຍຊະນິດຄື: ປີ່, ສີຕູ່, ກະຈັບປີ່, ຂຸຍ ແລະ ອື່ນໆ, ລັກສະ ນະການນຸ່ງຫົ່ມຂອງຊົນເຜົ່າຫໍ້ ທັງຜູ້ຊາຍ ແລະ ແມ່ຍິງລ້ວນແຕ່ມັກຊົມໃຊ້ໂສ້ງສີດ, ຜູ້ຊາຍນຸ່ງໂສ້ງສີດ, ຜົມຈິງໄວ້ຍາວ ໃສ່ຫມວກສີດສ່ວນແມ່ຍິງນຸ່ງໂສ້ງສີດຳຍາວຮອດຕີນ, ເສື້ອຍາວຕິດກະດຸມທາງຂ້າງເອົາຜ້າຄຽນຫົວ ແລະ ອື່ນໆ. ແຕ່ເວລາແຕ່ງດອງທັງຊາຍ ແລະ ຍິງມັກໃຊ້ຊຸດສີແດງລົດເຈົ້າບ່າວປະດັບ ປະດາດ້ວຍດອກໄມ້ສີແດງທັງຫມົດ.

ດ້ານປະເພນີການເກີດລູກຂອງຊົນເຜົ່າຫໍ້: ແມ່ນເກີດຢູ່ເຮືອນ, ມີແມ່ຂອງຜົວເປັນຜູ້ເບິ່ງແຍງດູແລ ແລະ ຜູ້ເຖົ້າທີ່ມີປະສົບການຄອຍໃຫ້ການຊ່ວຍເຫຼືອເບິ່ງແຍງເປັນຢ່າງດີ, ມີຂໍ້ຫ້າມ ແລະ ການຄະລຳອາຫານການກິນທີ່ມີ ລົດເຜັດ, ລົດເຄັມ, ລົດຄາວ, ຊົນເຜົ່າຫໍ້ ມັກລູກຊາຍຫຼາຍກ່ວາລູກຍິງ, ເນື່ອງຈາກວ່າລູກຊາຍເປັນຜູ້ສືບທອດຕະກຸນ ຂອງພໍ່ ແລະ ມູນມໍລະດົກຂອງ ຄອບຄົວຫຼາຍກວ່າລູກຍິງ.

ດ້ານປະເພນີການຕາຍຂອງຊົນເຜົ່າຫໍ້: ແມ່ນມີພິທີກຫຼາຍຂັ້ນຕອນ ເພື່ອເຮັດໃຫ້ວິນຍານຂອງຜູ້ຕາຍໄປ ສູ່ສະຫວັນດ້ວຍຄວາມປອດໄພ ຄົນຫໍ້ ຝັງສົບຄົນຕາຍຕາມຄວາມພໍໃຈຂອງພໍ່ແມ່ ແລະ ຍາດຕິພີ່ນ້ອງ, ເມື່ອເປັນ ແນວນັ້ນສ່ວນຫຼວງຫຼາຍ ຊົນເຜົ່າຫໍ້ຈະບໍ່ມີປ່າຊ້າຝັງສົບເປັນບ່ອນຄືຊົນເຜົ່າອື່ນໆ (ສຳລັບຢູ່ ແຂວງ ອຸດົມໄຊ)

ດ້ານເສດຖະກິດ: ຊົນເຜົ່າຫໍ້ ອາຊີບຕົ້ນຕໍແມ່ນເຮັດໄຮ່, ເຮັດນາປູກເຂົ້າຈ້າວ, ເຮັດສວນປູກພືດຜັກຕ່າງໆ ລ້ຽງສັດ: ງົວ, ຄວາຍ, ແບ້, ມ້າ, ຫມາ, ຫມູ, ເປັດ, ໄກ່ ເພື່ອເປັນອາຫານແລ້ວເຮັດພິທີກຕ່າງໆ. ວຽກງານຫັດ ຖະກຳຫຍິບຖັກປັກແສ່ວ, ຈັກ ສານຕ່າງໆ, ມີຄວາມຊຳນິຊຳນານມາແຕ່ບູຮານນະການ. ນອກຈາກນີ້ ຊົນເຜົ່າຫໍ້ຢູ່ ແຂວງອຸດົມໄຊ ມີຄວາມຊຳນິຊຳນານໃນການຜະລິດສິນຄ້າ, ຕັ້ງຮ້ານຂາຍເຄື່ອງ ແລະ ການບໍລິການອື່ນໆ ພາຍໃນ ຫ້ອງຕະຫຼາດຂອງແຂວງ ແລະ ເມືອງໃນທົ່ວແຂວງອຸດົມໄຊ, ຈຸດເດັ່ນຂອງເຜົ່າຫໍ້ ແມ່ນຄອບຄົວໃດທຸກຍາກໄດ້ ຊ່ວຍເຫຼືອກັນດ້ານວັດຖຸ ແລະ ວິທີການດ້ານເສດຖະກິດ, ການບໍລິການເປັນສຳຄັນຕໍ່ໄປແມ່ນດ້ານທ່າແຮງດ້ານການ ປູກຢາງພາລາເປັນສິນຄ້າ.

ຊົນເຜົ່າຫໍ້: ຮີດຄອງການກິນຈຽງຂອງເຜົ່ານີ້ແມ່ນມັກຫຼິ້ນດອກໄມ້ໄຟ, ຫມາກກະໂພກ, ບັ້ງໄຟດອກ ແລະ ດອກໄຟອື່ນໆ ທີ່ມີສຽງດັງແຮງ ເຊິ່ງມັນກໍ່ໃຫ້ເກີດເປັນອັນຕະລາຍຕໍ່ຄົນ ແລະ ຊັບສິນພວກເຮົາຄວນມີຄຳຄິດຕໍ່ບັນ ຫາຕ່າງໆທີ່ເກີດຂຶ້ນໃນສິ່ງທີ່ບໍ່ດີຊົນເຜົ່ານີ້ກໍ່ແມ່ນຊົນເຜົ່າຫນຶ່ງທີ່ຂຶ້ນກັບໃນວົງຄະນະຍາດແຫ່ງຊາດລາວໂດຍສະ ເພາະແມ່ນແຂວງອຸດົມໄຊ.

## History of Hor Ethnic Group

Hor is also an official ethnic group among the others in Northern Laos, especially in Oudomxay province. Originally, Hor people are from China. They moved to Phongsaly province in the 19th century. After that two families continued moving to Oudomxay province in 1965 – 1970. They first settled down in Ban Houaykhoum, Xay disrtcit, Oudomxay province. After 1975, Hor people started moving from other places to Oudomxay more and more. According to the Oudomxay statistic in 2011, the Hor's population in the whole province was 2,629 persons (1,263 females). Most of them were in Xay district and Namor District. At the moment, the increasing number of Hor's population is getting higher and higher.

Hor people have their own speaking and writing language. The language is identified in the linguistic type of China – Tibet language. Hor New Year festival celebration is held in January. During the New Year, animals like pig and chicken will be killed for sacrifice to their ancestors, spirit of the father and mother. Firework is also fired all around during the celebration time.

The house's location is chosen with great care, as it important that the location be acceptable to their ancestors in order to have a happy life. In the past, the Hor traditional house is attached to the ground like the Hmong style. The house is divided into different rooms according to the amount of the family members. There are bedrooms, Kitchen and storage, but no specific living and dining room.

To have a correct funeral is of great importance to Hor people, for as a result the soul will prosper in the afterworld. It is preferable to die in one's own home or, at least in the home of a clansman. When death seems about to happen, close relatives gather around the dying person for mutual comfort, and for sharing the many duties that arise when death occurs. Most of the corpse will be buried at the cemetery as well as in the garden or somewhere appropriate.

Each baby is said to be sent to the family by a god 'Baby Goddess'. After giving a birth the father calls in a village elder to hold a welcome ceremony. Chickens are sacrificed as an offering of thanks to God, and to invite the soul to take up permanent residence within the child's body and in the parental household. This serves to adopt the child into the world of human beings, and formally accept it into the parent's relationship group. The baby is then given a name and introduced to the household sprits to give it protection. The birth takes place in the couple's bedroom, and no one but the husband and some experienced women can be present to assist in her delivery. The woman sits on two stools on the sleeping platform with her body covered by a blanket, learning on her husband for support. The child drops onto the springy bamboo, which cushions its fall and also, they say, helps the child to start breathing.

The mother will lies near the fire of the main hearth for three - four days after giving birth and it's depend on the health of the mother, then may return to her bedroom. For 30 days she should eat only chicken, pork and rice, as it is believed that chicken and pork will help her recover her strength quickly, and other food might poison her. After a month she returns to the fields to work and may resume sleeping with her family.

The main crop that Hor people prefer to plant is rice and vegetables, including Livestock such as cattle, buffalo, goat, dog, pig, duck and chicken. Moreover, both Hor men and women are experienced in trade, embroidery, basketry and knitting since ancient time. The good point of the Hor's community is they support each other, particularly to the poor families by offering loan, materails, ideas, and other stuffs.